ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ
ສະຫຼຸບເອກະສານ
ເລກທີ 0858
ລົງວັນທີ 08 MAY 2014
ເວລາ...........................
ສົ່ງເຖິງ...........................

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 164 /ນຍ

ນະຄອນຫລວງວຽງຈັນ, ວັນທີ 7.5.2014

# ດຳລັດ
## ວ່າດ້ວຍການຮັບຮອງ, ການຢັ້ງຢືນ ແລະ ການຍົກເວັ້ນ
## ສະເພາະບາງບັນຫາທີ່ຕິດພັນກັບເຂື່ອນໄຟຟ້ານ້ຳຕົກ ນ້ຳມັງ1

ໂດຍອີງຕາມ:

- ກົດໝາຍວ່າດ້ວຍ ໄຟຟ້າ (ສະບັບປັບປຸງ) ເລກທີ 03/ສພຊ, ລົງວັນທີ 20 ທັນວາ 2011(**ກົດໝາຍວ່າດ້ວຍໄຟຟ້າ**)
- ກົດໝາຍວ່າດ້ວຍ ທີ່ດິນ ສະບັບເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003 (**ກົດໝາຍວ່າດ້ວຍທີ່ດິນ**)
- ກົດໝາຍວ່າດ້ວຍ ນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ສະບັບເລກທີ 02-96/ສພຊ, ລົງວັນທີ11ຕຸລາ 1996 (**ກົດໝາຍວ່າດ້ວຍນ້ຳແລະຊັບພະຍາກອນແຫຼ່ງນ້ຳ**)
- ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ສະບັບເລກທີ 02/ສພຊ, ລົງວັນທີ 8 ກໍລະກົດ ປີ 2009 (**ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ**)
- ກົດໝາຍວ່າດ້ວຍ ພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ ປີ 2011 (**ກົດໝາຍວ່າດ້ວຍພາສີ**)
- ດຳລັດວ່າດ້ວຍ ປ່າປ້ອງກັນ ສະບັບເລກທີ 333/ນຍ, ລົງວັນທີ 19 ກໍລະກົດປີ 2010 (**ດຳລັດວ່າດ້ວຍປ່າປ້ອງກັນ**)
- ດຳລັດວ່າດ້ວຍ ການເຊົ່າ ຫຼື ສຳປະທານທີ່ດິນຂອງລັດ ສະບັບເລກທີ 135/ນຍ, ລົງວັນທີ 25 ກໍລະກົດ ປີ 2009 (**ດຳລັດວ່າດ້ວຍການເຊົ່າ ຫຼື ສຳປະທານທີ່ດິນຂອງລັດ**)
- ດຳລັດວ່າດ້ວຍ ລະບອບປະກັນສັງຄົມສຳລັບຜູ້ອອກແຮງງານໃນວິສາຫະກິດ ສະບັບເລກທີ 207/ນຍ, ລົງວັນທີ 23 ທັນວາ ປີ 1999 (**ດຳລັດວ່າດ້ວຍລະບອບປະກັນສັງຄົມ**)
- ສັນຍາສຳປະທານໂຄງການພະລັງງານໄຟຟ້ານ້ຳຕົກ ນ້ຳມັງ1 (**ສັນຍາສຳປະທານ**) ສະບັບລົງວັນທີ 9 ມັງກອນ 2013 ແລະ ເຊັນໂດຍລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (**ລັດຖະບານລາວ**) ຕາງໜ້າໂດຍ ກະຊວງແຜນການ ແລະ ການລົງທຶນ ແລະບໍລິສັດໄຟຟ້ານ້ຳຕົກ ນ້ຳມັງ1 ຈຳກັດ (**ບໍລິສັດ**) ກ່ຽວກັບໂຄງການພະລັງງານໄຟຟ້ານ້ຳຕົກ ນ້ຳມັງ1 (**ໂຄງການ**)

- ມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ແຫ່ງ ສ ປ ປ ລາວ ກ່ຽວກັບ ການຮັບຮອງເອົາການຕົກລົງໃຫ້ສຳປະທານແກ່ບໍລິສັດໄຟຟ້ານ້ຳຕົກ ນ້ຳມັງ1 ຈຳກັດ, ສະບັບເລກທີ 0106/ຄປຈ, ລົງວັນທີ 7 ຕຸລາ 2013; (ຄຳສັບພິມໃຫຍ່ທີ່ບໍ່ໄດ້ນິຍາມໄວ້ຢ່າງອື່ນໃນມະຕິຕົກລົງສະບັບນີ້ຕ້ອງມີຄວາມໝາຍຕາມທີ່ໃຫ້ໄວ້ໃນສັນຍາສຳປະທານ).

**ນາຍົກລັດຖະມົນຕີ ອອກດຳລັດ:**

**ມາດຕາ 1 ດຳລັດສະບັບນີ້ ອະນຸມັດ:**

1.1 ໂດຍອີງຕາມ ມາດຕາ 66(2) ຂອງ **ກົດໝາຍວ່າດ້ວຍ ທີ່ດິນ**, ສິດຂອງບໍລິສັດ ໃນການນຳໃຊ້ຊັບສິນຄົງທີ່ຊຶ່ງຕັ້ງຢູ່ເທິງທີ່ດິນທີ່ເຊົ່າ ເປັນຫຼັກຊັບຄ້ຳປະກັນ.

1.2 ໂດຍອີງຕາມມາດຕາ 18 ແລະ19 ຂອງ **ກົດໝາຍວ່າດ້ວຍ ນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ**, ການນຳໃຊ້ນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳຂະໜາດໃຫຍ່ ແລະ ກິດຈະກຳຂະຫນາດໃຫຍ່ສຳລັບຈຸດປະສົງຂອງໂຄງການແລະການຄຸ້ມຄອງໂຄງການ.

1.3 ຂໍ້ຕົກລົງລາຄາໄຟຟ້າທີ່ໄດ້ລະບຸໄວ້ໃນສັນຍາຊື້ໄຟຟ້າແມ່ນສອດຄ່ອງຕາມມາດຕາ 47 ແລະ 48 ຂອງ **ກົດໝາຍວ່າດ້ວຍ** ໄຟຟ້າ.

**ມາດຕາ 2 ດຳລັດສະບັບນີ້ ຍົກເວັ້ນ:**

2.1 ບໍລິສັດ ຈາກມາດຕາ 4 ຂອງ**ດຳລັດວ່າດ້ວຍ ການຈັດຕັ້ງປະຕິບັດກົດໝາຍສົ່ງເສີມການລົງທຶນ**, ຊຶ່ງ ຖ້າບໍ່ໄດ້ຍົກເວັ້ນຕ້ອງຖອກທຶນຢ່າງນ້ອຍຊາວສ່ວນຮ້ອຍ (20%) ຂອງທຶນຈົດທະບຽນຂອງບໍລິສັດພາຍໃນ 90 ວັນລັດຖະການ ນັບແຕ່ວັນທີ່ສ້າງຕັ້ງບໍລິສັດ ແລະ ຖອກທຶນຈົດທະບຽນທີ່ເຫຼືອພາຍໃນ 2 ປີ ນັບແຕ່ວັນທີ່ສ້າງຕັ້ງບໍລິສັດ ແລະ ຕ້ອງຖອກເປັນເງິນກີບ;

2.2 ບໍລິສັດ ຈາກມາດຕາ18 ຂອງ**ດຳລັດວ່າດ້ວຍ ການຈັດຕັ້ງປະຕິບັດກົດໝາຍສົ່ງເສີມການລົງທຶນ**, ຊຶ່ງຖ້າບໍ່ໄດ້ຍົກເວັ້ນ ຕ້ອງກຳນົດໃຫ້ບໍລິສັດ ຖອກທຶນຈົດທະບຽນຄົບກ່ອນມີການໂອນຮຸ້ນ ທີ່ກ່ຽວກັບການໂອນ ດັ່ງນີ້: (I) ໃຫ້ບໍລິສັດໃນເຄືອຂ່າຍ, (II) ເມື່ອມີການບັງຄັບປະຕິບັດໂດຍຜູ້ໃຫ້ກູ້ຢືມ ແລະ (III) ລະຫວ່າງ ຜູ້ຖືຮຸ້ນດ້ວຍກັນ.

2.3 ບໍລິສັດ ຈາກຂໍ້ກຳນົດພາຍໃຕ້ ມາດຕາ 4 ຂອງ**ດຳລັດວ່າດ້ວຍ ການເຊົ່າ ຫຼື ສຳປະທານທີ່ດິນຂອງລັດ** ສຳລັບການຈ່າຍຄ່າທຳນຽມເຊົ່າທີ່ດິນຂອງພື້ນທີ່ອື່ນພາຍໃນສະຖານທີ່ໂຄງການ(ເຂດໂຄງການ), ເວັ້ນເສຍແຕ່ທີ່ໄດ້ກຳນົດໄວ້ຢ່າງອື່ນຢູ່ໃນສັນຍາເຊົ່າທີ່ດິນ ກ່ຽວກັບ ການຈ່າຍຄ່າເຊົ່າສຳລັບພື້ນທີ່ກຳນົດສະເພາະພາຍໃນເຂດໂຄງການ;

2.4 ບໍລິສັດ ຈາກມາດຕາ43 ຂອງ **ດຳລັດວ່າດ້ວຍ ການເຊົ່າ ຫຼື ສຳປະທານທີ່ດິນຂອງລັດ**, ກ່ຽວກັບການຄິດໄລ່ຄ່າຊົດເຊີຍໃຫ້ຜູ້ທີ່ຮັບຜົນກະທົບຈາກໂຄງການໂດຍມີເງື່ອນໄຂ ວ່າ ບໍລິສັດໂຄງການຕ້ອງປະຕິບັດສອດຄ່ອງຕາມຂໍ້ກຳນົດທີ່ກ່ຽວຂ້ອງຂອງແຜນຄຸ້ມຄອງ ແລະ ຕິດຕາມສັງຄົມທີ່ໄດ້ອະນຸມັດໄວ້ ແລະ ຂໍ້ກຳນົດຂອງສັນຍາສຳປະທານ.